

ບົດສຳພາດ ທ່ານ ສົມໄຊ ສີຊານົນ
ຫົວໜ້າໂຄງການສົ່ງເສີມກະສິກຳ(LEAP)
ທີ່ ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ(NAFES)
ພະຈິກ 2003

## ບ່ອນອີງທາງດ້ານນະໂຍບາຍ ສຳລັບການສ້າງລະບົບສົ່ງເສີມຂັ້ນບ້ານ (VES)

ຖ:

ໃນກອງປະຊຸມສຳມະນາທົ່ວປະເທດກ່ຽວກັບການສົ່ງເສີມຂອງ NAFES ຄັ້ງວັນທີ 12 ຕຸລາ 2003 ສະໜັບສະໜຸນໂດຍ LEAP/SDC, ໄດ້ມີການກຳນົດທັດສະນະໃນທາງປະຕິບັດອອກແຈ້ງວ່າການສົ່ງເສີມ ກະສິກຳໃນ ສສປລ ຄວນເປັນຢ່າງໃດ. ສິ່ງສຳຄັນໃນທັດສະນະດັ່ງກ່າວແມ່ນຕ້ອງສ້າງໃຫ້ມີລະບົບຕາໜ່າງການສົ່ງເສີມ ຂັ້ນບ້ານ ຫຼື "Village Extension System" (VES). ຊຶ່ງລະບົບດັ່ງກ່າວຕ້ອງດຳເນີນການປະຕິບັດບົນພື້ນຖານຄວາມຮັບຜິດຊອບຂອງ(ບ້ານ)ເອົາເອງ.ພື້ນຖານແນວຄວາມຄິດໃນເລື່ອງນີ້ມີອັນໃດແດ່?

ຕ:

ບ່ອນອີງທາງດ້ານນະໂຍບາຍສຳລັບການສ້າງລະບົບສົ່ງເສີມຂັ້ນບ້ານມີຈະແຈ້ງທີ່ສຸດ, ນັ້ນກໍ່ແມ່ນດຳລັດ 01/ນຍ , ຊຶ່ງເປັນບ່ອນອີງພື້ນຖານໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ. ຫຼາຍປີຜ່ານມາ ກະຊວງກະສິກຳແລະປ່າໄມ້ ແມ່ນໄດ້ອອກແຮງຜັນຂະຫຍາຍນະໂຍບາຍດັ່ງກ່າວເຂົ້າສູ່ພາກປະຕິບັດຕົວຈິງຢ່າງຫຼາຍຮູບຫຼາຍສີ ແລະ ໄດ້ ມີທິດນຳອັນຈະແຈ້ງເພື່ອເຮັດໃຫ້ເກີດມີການຈັດຕັ້ງປະຕິບັດຕາມເນື້ອໃນຈິດໃຈດຳລັດດັ່ງກ່າວຢູ່ໃນຂະແໜງ ການ ກະສິກຳ ແລະ ປ່າໄມ້ຂອງຕົນ,ໂດຍຢຶດໝັ້ນໃນຫຼັກການເຮັດໃຫ້ແຂວງກາຍເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍແຜນການ-ການເງິນ ແລະ ບ້ານເປັນບ່ອນຈັດຕັ້ງປະຕິບັດທຸກກິດຈະກຳການພັດທະນາພາຍໃນບ້ານ.




ດັ່ງນັ້ນ,ຈຶ່ງເຫັນໄດ້ວ່າກົນໄກການຄຸ້ມຄອງພາກລັດນັບແຕ່ລະດັບກະຊວງ ກ ປ ລົງຫາແຂວງ ຈົນໄປເຖິງເມືອງ ແມ່ນເປັນພາກສ່ວນລະບົບໃຫ້ການສະໜັບສະໜຸນແກ່ພື້ນຖານການຜະລິດ ກໍ່ຄື ບ້ານໃນການຈັດຕັ້ງປະຕິບັດກິດຈະການການພັດທະນາຂອງເຂົາເຈົ້າ. ໝາຍຄວາມວ່າຢູ່ໃນລະດັບເມືອງພວກເຮົາມີຄວາມຈຳເປັນຕ້ອງມີນັກສົ່ງເສີມທີ່ມີຂີດຄວາມສາມາດອີ່ຫຼີໃນການ ເຮັດວຽກໃຫ້ການສະໜັບສະໜູນຊາວບ້ານປະຕິບັດກິດຈະກຳການຜະລິດຂອງເຂົາເຈົ້າ. ທັງນີ້ກໍ່ເນື່ອງຈາກວ່າແຕ່ລະບ້ານຍ່ອມມີຄວາມຕ້ອງການແຕກຕ່າງກັນບໍ່ວ່າດ້ານຄວາມຮູ້ ແລະ ພຶດຕິກຳໃນການພັດທະນາປັບປຸງແບບແຜນການຜະລິດຂອງຕົນ,ສະນັ້ນນັກສົ່ງເສີມຈະຕ້ອງໄດ້ມີຄວາມຮູ້ຄວາມສາມາດທີ່ກ້ວາງຂວາງພໍສົມຄວນ, ໂດຍສະເພາະຄວາມຮູ້ດ້ານຮູບແບບວິທີການສົ່ງເສີມ ແລະ ຮວມທັງດ້ານເຕັກນິກວິຊາສະເພາະອີກດ້ວຍ, ຊຶ່ງພວກເຮົາພະຍາຍາມຢາກສ້າງໃຫ້ພະນັກງານ ກ ປ ເມືອງກາຍເປັນນັກສົ່ງເສີມຮອບດ້ານຫຼື “generalist” ເພື່ອເຮັດວຽກດັ່ງກ່າວໂດຍມີການປະສານຢ່າງໃກ້ຊິດກັບບັນດານັກວິຊາການສະເພາະດ້ານຈາກຂະແໜງການອື່ນໆ

ໃນລະດັບແຂວງ ແລະ ສູນສະຖານີເພື່ອເຂົ້າໄປຮ່ວມກັນຊ່ວຍຊາວບ້ານແກ້ໄຂບັນຫາການຜະລິດໃຫ້ທັນຕາມຄວາມ ຕ້ອງການຂອງພື້ນຖານການຜະລິດ.

ຖ:
ຖ້າດັ່ງນັ້ນກໍ່ໝາຍວ່າລະບົບສົ່ງເສີມຂອງ ສປປລ ແມ່ນຂຶ້ນກັບຄວາມຕ້ອງການຂອງພື້ນຖານການຜະລິດບ້ານ. ເມື່ອວ່າແຕ່ລະບ້ານມີຄວາມຕ້ອງການແຕກຕ່າງກັນ, ທ່ານຈະມີວິທີດໍາເນີນການແລະຄຸ້ມຄອງການໃຫ້ບໍລິການແນວ ໃດໄດ້ ຢ່າງທົ່ວເຖິງ?

ຕ:
ສິ່ງນີ້ແລ້ວ! ທີ່ພວກເຮົາຕ້ອງປະເຊີນໜ້າກັບມັນໃຫ້ໄດ້. ທ່ານຕ້ອງເຂົ້າໃຈວ່າສະພາວະຄວາມເປັນຈິງໃນປະເທດພວກເຮົາມີຄວາມຫຼາກຫຼາຍບໍ່ວ່າດ້ານລະບົບນິເວດກະສິກໍາ, ຄວາມອຸດົມສົມບູນຂອງດິນ,ຮີດຄອງປະເພນີຊົນເຜົ່າຕ່າງໆ, ສະພາບການຄົມມະນາຄົມຂົນສົ່ງ ແລະການເຂົ້າເຖິງຕະຫຼາດຮວມທັງການຕິດລ່ຽມທາງການຄ້າແລະອື່ນໆ. ໃນເຂດທົ່ງພຽງມີລະບົບຊົນລະປະທານໜ້າແໜ້ນແດ່ແລະກໍ່ມີສະພາບໂຄງລ່າງການຄົມມະນາຄົມດີ ແຕ່ໃນເຂດພູດອຍຫ່າງໄກສອກຫຼີກແມ່ນຍັງມີຄວາມຫຍຸ້ງຍາກຫຼາຍ.
ເມື່ອສະພາບທາງກາຍະພາບ,ເສດຖະກິດສັງຄົມລ້ວນແຕ່ມີຄວາມແຕກຕ່າງໃຫຍ່ຫຼວງ,ການວາງກອບຄວາມຄິດເພື່ອການພັດທະນາມັນກໍ່ຕ້ອງໄດ້ຕຶກຕອງໃຫ້ດີຈື່ງຈະສອດຄອ່ງກັບຄວາມຕ້ອງການທີ່ແຕກຕ່າງນັ້ນ.



ຄວາມແຕກຕ່າງດັ່ງທີ່ໄດ້ກ່າວນັ້ນໄດ້ມີການຮັບຮູ້ໃນລະດັບການວາງນະໂຍບາຍແລ້ວ. ທຸກກິດຈະການ ການພັດທະນາ,ລັດພວກເຮົາຕ້ອງໄດ້ສ້າງຂຶ້ນບົນພື້ນຖານສະພາວະຄວາມເປັນຈິງ ແລະ ທ່າແຮງທີ່ມີ. ສະນັ້ນ,ບໍ່ມີສິ່ງທີ່ຕ້ອງສົງໃສວ່າຖ້າຢາກໃຫ້ເກີດການພັດທະນາທີ່ເປັນຮູບປະທໍາ, ບໍ່ມີອັນບ່ຽງເບນ ກໍ່ຕ້ອງມາຈາກຄວາມຄິດ,ການປະກອບສ່ວນອັນແຮງກ້າຂອງປະຊາຊົນໃນພື້ນຖານການຜະລິດເພາະເຂົາເຈົ້າເປັນຜູ້ທີ່ເຂົ້າໃຈເລິກເຊິ່ງຕໍ່ສະພາວະຄວາມເປັນຈິງທີ່ມີຢູ່ນັ້ນ.

ຖ:
ຖ້າດັ່ງນັ້ນ,ກໍ່ໝາຍວ່າຈະມີຂະບວນການສົ່ງເສີມແຕກຕ່າງກັນໄປໃນແຕ່ລະແຂວງ, ເມືອງແລະແຕ່ລະບ້ານ?

ຕ:
ແນ່ນອນ. ກໍລະນີນີ້ແຈ້ງໃນນະໂຍບາຍຢູ່ແລ້ວວ່າຈະບໍ່ມີວິທີການມາດຕະຖານສົມບູນອັນໃດດອກທີ່ຈະສາມາດນໍາໄຊ້ໄດ້ໃນທຸກມູມຂອງປະເທດ.ເຖິງຈະກໍານົດຫຼືເວົ້າຄືເປັນອັນງ່າຍ ແຕ່ກໍ່ເປັນໄປບໍ່ໄດ້ໃນທາງປະຕິບັດ. ພວກເຮົາຕ້ອງຮຽນຮູ້ໃນການດັດສົມຂະບວນການປະຕິບັດໃຫ້ເຂົ້າກັບສະພາບທີ່ມີຄວາມແຕກຕ່າງຢູ່ແຕ່ລະບ່ອນຢ່າງເປັນລະບົບທີ່ຕໍ່ເນື່ອງ,ແນ່ນອນຕ້ອງບົນພື້ນຖານຜົນທີ່ໄດ້ຮັບຕົວຈິງໃນການນໍາໄຊ້ເຕັກນິກຂອງປະຊາຊົນຜູ້ຜະລິດໃນແຕ່ລະເມືອງ ແລະບ້ານນັ້ນໆ.

ຖ:
ເມື່ອເປັນແນວນີ້, ມີສິ່ງໃດທີ່ເປັນວິໃສທັດອັນສາມາດສະແດງໃຫ້ເຫັນເຖີງຄວາມເປັນຫຼັກການສຳຄັນລວມສຳລັບວຽກງານ ສົ່ງເສີມ ໃນ ສປປລ?

ຕ:
ນັ້ນແລ້ວຄືລະບົບການສົ່ງເສີມຂັ້ນບ້ານ VES. ແນວຄວາມຄິດຂອງ VES ຈະຕ້ອງຖືກນຳໃຊ້ທົ່ວປະເທດ. ສ່ວນບົດບາດໜ້າທີ່ໃນການສະໜັບສະໜູນຂອງຫ້ອງການ ກ ປ ເມືອງ ແລະ ກອງສົ່ງເສີມຂັ້ນແຂວງກໍ່ຕ້ອງມີຄວາມເປັນເອກະພາບກັນໃນທົ່ວປະເທດເໝືອນກັນ. ແຕ່ແນ່ນອນການທີ່ຈະນຳເອົາຕົວເຕັກໂນໂລຢີແລະວິທີການອັນໃດເຂົ້າໄປສົ່ງເສີມນັ້ນ ແມ່ນຂຶ້ນກັບຄວາມຕ້ອງການຂອງແຕ່ລະທ້ອງຖິ່ນທີ່ໂຄງການເຂົ້າໄປຫາ

## ກ່ຽວກັບຫຼັກການລວມຂອງ VES

ຖ:
ເມື່ອການຈັດຕັ້ງປະຕິບັດວຽກສົ່ງເສີມໃນແຕ່ລະເມືອງ ແລະ ບ້ານຍ່ອມຕ້ອງມີສິ່ງດັດສົມແຕກຕ່າງກັນນັ້ນ, ກໍ່ໝາຍວ່າພວກທ່ານມີຫຼັກການແລະຂໍ້ແນະນຳທີ່ເປັນພື້ນຖານລວມທີ່ເປັນສິ່ງທຸກຝ່າຍຕ້ອງປະຕິບັດໃນທຸກໆບ້ານທີ່ຈະເຂົ້າໄປສົ່ງເສີມ?

ຕ:
ຖືກຕ້ອງ!. ຫຼັກການລວມຂອງ VES ຈະຕ້ອງໄດ້ນຳໃຊ້ໃນທຸກບ່ອນທີ່ເຂົ້າສົ່ງເສີມ ແລະຫຼັກການນີ້ປະກອບມີ:

ກ) ກົງຈັກອຳນາດການປົກຄອງບ້ານໃນລາວປະກອບດ້ວຍຫຼາຍພາກສ່ວນຄື ນາຍບ້ານ/ຄະນະ, ຕົວແທນຈາກອົງການຈັດຕັ້ງແນວໂຮມ, ຊາວໜຸ່ມແລະແມ່ຍິງພາຍໃນບ້ານ. ອຳນາດການປົກຄອງບ້ານນັ້ນໆຕ້ອງເປັນຜູ້ເອື້ອອຳນວຍຈັດຕັ້ງ ແລະ ຄຸ້ມຄອງຕານ່າງໆການສົ່ງເສີມຂັ້ນບ້ານຂອງຕົນຮວມທັງເປັນຜູ້ຊຸກຍູ້ໃຫ້ເກີດມີການ ເຄື່ອນໄຫວຢ່າງເປັນປົກກະຕິຢູ່ພາຍໃນບ້ານຂອງຕົນ.

ຂ) ອຳນາດການປົກຄອງເປັນເຈົ້າການໃນການຊຸກຍູ້ຄອບຄົວຊາວກະສິກອນທີ່ຊາວບ້ານທົ່ວໄປເຊື່ອໝັ້ນໃນຄວາມສາມາດແລະປະສົບການການຜະລິດໃຫ້ກາຍເປັນວິຊາການບ້ານຫຼື Village Extension Worker (VEW). ເພື່ອສືບຕໍ່ກະຈ່າຍຄວາມຮູ້ພາຍໃນບ້ານ. ໃນບ້ານນຶ່ງໆອາດມີຫຼາຍວິຊາການບ້ານເຊັ່ນ: ດ້ານປູກຝັງ, ສັດຕະວະແພດ,ຊົນລະປະທານ.. ຂຶ້ນກັບຄວາມຕ້ອງການຂອງບັນດານຄອບຄົວໃນບ້ານ,ແຕ່ສຳຄັນວິຊາການບ້ານຕ້ອງເຄື່ອນໄຫວພາຍໃຕ້ການຄຸ້ມຄອງຂອງອຳນາດການປົກຄອງບ້ານ ຫາກບໍ່ແມ່ນຂຶ້ນກັບ ຫ້ອງການ ກ ປ ເມືອງ.



ຄ) ພວກເຮົາຄາດວ່າການສ້າງວິຊາການບ້ານຕ້ອງຜ່ານຂະບວນການ ຮຽນຮູ້ໂດຍຕ້ອງຈັດຕັ້ງເປັນກຸ່ມຮຽນຮູ້ກ່ອນ ຫຼື ຈະຮຽກວ່າ "ກຸ່ມຜະລິດ"ຈະໃນເລື່ອງໃດກໍ່ຕາມ,ຊຶ່ງກຸ່ມນັ້ນໆຈະເປັນຜູ້ໄດ້ຮັບ

ການຝຶກແລກປ່ຽນບົດຮຽນກັນກ່ຽວກັບເຕັກນິກວິທີການຜະລິດໃໝ່ໃດນຶ່ງ.ເມື່ອຮຽນຮູ້ເລື່ອງນຶ່ງໄດ້ແລ້ວເຂົາເຈົ້າ ອາດກ້າວໄປສູ່ເລື່ອງໃໝ່ເຊັ່ນການເກັບມ້ຽນແລະການຕະລາດ..

ງ) ພາລະກິດສຳຄັນຂອງວິຊາການບ້ານແມ່ນການເຮັດໃຫ້ເຕັກນິກອັນໃໝ່ກະຈ່າຍຕໍ່ສູ່ຄອບຄົວອື່ນທີ່ສົນໃຈຢູ່ພາຍ ໃນບ້ານຂອງຕົນ.

ຈ) ການປະສານສົມທົບທາງວິຊາການຂອງນັກສົ່ງເສີມຈາກຫ້ອງການ ກ ປ ເມືອງຕ້ອງເນັ້ນໃສ່ທີ່ວິຊາການບ້ານເປັນຕົ້ນຕໍ. ເຕັກໃໝ່ອັນໃດກໍ່ຕາມທີ່ນຳເຂົ້າສົ່ງເສີມເມື່ອກຸ່ມຜະລິດ ແລະ ວິຊາການບ້ານເກີດມີແລ້ວໃນເລື່ອງນັ້ນ ໜ້າທີ່ຂະຫຍາຍຕໍ່ຕ້ອງເປັນຂອງວິຊາການບ້ານນັ້ນໆ.

f) ການຄຸ້ມຄອງແລະນຳໃຊ້ຊັບພະຍາກອນຕ່າງໆເພື່ອການຮັກສາ,ເຄື່ອນໄຫວແລະພັດທະນາຕານ່າງການສົ່ງເສີມຂັ້ນບ້ານໃຫ້ຍືນຍົງແມ່ນເປັນໜ້າທີ່ ແລະ ຄວາມຮັບຜິດຊອບຂອງອຳນາດການປົກຄອງບ້ານທີ່ຕ້ອງສັນຫາ, ຈັດຕັ້ງແລະຂະຫຍາຍເອົາເອງ, ຫາກບໍ່ແມ່ນຈະລໍຄອຍຈາກງົບປະມານຂອງຫ້ອງການ ກ ປເມືອງ. ຕົວຢ່າງການສັນຫາສິ່ງຈູງໃຈໃຫ້ວິຊາການບ້ານໄດ້ເຄື່ອນໄຫວແມ່ນຂື້ນກັບການຕົກລົງພາຍໃນບ້ານເອົາເອງອາດຈ່າຍໃຫ້ຜູ້ກ່ຽວເປັນເງິນ, ວັດຖຸ ຫຼື ແຮງງານກໍ່ໄດ້-ບໍ່ມີສູດຕາຍຕົວ. ແຕ່ບົດບາດທີ່ສຳຄັນທີ່ສຸດກໍ່ຄືກອງທຶນພັດທະນາບ້ານນັ້ນເອງ ຫຼື ກອງທຶນຂອງກຸ່ມຜະລິດນັ້ນໆ.

## ໜ້າທີ່ຂອງເມືອງ

ຖ:
ເມື່ອເປັນເຊັ່ນນັ້ນ,ໜ້າທີ່ຂອງນັກສົ່ງເສີມຂັ້ນເມືອງຈະເຮັດຫຍັງແດ່ເວລາເຂົ້າໄປເຮັດວຽກກັບຕານ່າງສົ່ງເສີມຂັ້ນບ້ານທີ່ສ້າງໄດ້ແລ້ວນັ້ນ

ຕ:



ໜ້າທີ່ຂອງນັກສົ່ງເສີມເມືອງ ໃນໄລຍະນີ້ ແມ່ນໃຫ້ຂໍ້ມູນ ແລະ ການຝຶກ/ແນະນຳດ້ານເຕັກນິກສະເພາະດ້ານເພື່ອໃຫ້ເກີດມີການແລກປ່ຽນລະວ່າງວິຊາການບ້ານ ຫຼື ກຸ່ມຜະລິດດ້ວຍກັນພາຍໃນເມືອງທັງນີ້ແມ່ນແນໃສ່ ໃຫ້ເກີດການຮຽນຮູ້ໃນສິ່ງໃໝ່ໆຕື່ມ

ຈິງໆແລ້ວກໍ່ແມ່ນ:

ນັກສົ່ງເສີມເມືອງຈະເຮັດໜ້າທີ່ຝຶກຊຸກຍູ້ເວລາໃດທີ່ມີການນຳສະເໜີເຕັກໂນໂລຢີແລະເຕັກນິກອັນໃໝ່ທີ່ວິຊາການບ້ານຍັງບໍ່ທັນຄຸ້ນເຄີຍແລະມີຄວາມຮູ້ເທື່ອ. ສ່ວນການກະຈ່າຍສິ່ງທີ່ໄດ້ຜ່ານຂະບວນການຮຽນຮູ້ແລ້ວຕ້ອງແມ່ນໜ້າທີ່ຂອງວິຊາການບ້ານ, ທ່ານອາດຈະຈຳໄດ້. ອີກຢ່າງນຶ່ງນັກສົ່ງເສີມເມືອງຈະເຮັດໜ້າທີ່ຈັດການປະຊຸມແລກປ່ຽນບົດຮຽນລະວ່າງວິຊາການບ້ານຈາກຫຼາຍໆບ່ອນຮວມກັນເພື່ອຮຽນຮູ້ເຕັກໂນໂລຢີໃໝ່ໆ .ນອກນັ້ນກໍ່ແມ່ນຈັດການປະຊຸມນັດພົບລະວ່າງຊາວກະສິກອນດີເດັ່ນດ້ານຕ່າງໆຈາກຫຼາຍໆບ້ານຮ່ວມກັນ,ຊຶ່ງອາດເປັນຕົວ

ແທນຂອງກຸ່ມຜະລິດຂອງແຕ່ລະບ້ານເພື່ອເຂົ້າຮ່ວມຮຽນຮູ້ເຕັກນິກເລື່ອງໃໝ່ທີ່ເຂົາເຈົ້າສົນໃຈ. ເມື່ອໃດເຂົາເຈົ້າກັບຄືນບ້ານກໍ່ຕ້ອງເຮັດໜ້າທີ່ກະຈ່າຍຄວາມຮູ້ໃຫ້ສາມະຊິກຄົນອື່ນຕໍ່.

## ກ່ຽວກັບການປະຕິບັດໂຄງການຜ່ານມາ

ຖ:

ມາເຖິງປະຈຸບັນເທົ່າທີ່ຮູ້ກັນແມ່ນມີຫຼາຍໆໂຄງການໄດ້ຈັດຕັ້ງປະຕິບັດແຕ່ກໍ່ຢູ່ໃນກອບການປະຕິບັດຂອງໃຜມັນຕາມແຕ່ລະໂຄງການທີ່ແຕກຕ່າງກັນໄປ. ທ່ານຄິດວ່າ VES ຈະເປັນກອບການປະຕິບັດວຽກສົ່ງເສີມທີ່ເປັນບ່ອນອີງພື້ນຖານສຳລັບລະບົບລວມຂອງຂະແໜງການຫຼືຈະຕ້ອງສ້າງໃຫ້ເປັນໂຄງການສະເພາະເພື່ອຊຸກນຳໃຫ້ເກີດການປະສານສົມທົບບໍ?

ຕ:

ສິ່ງດັ່ງກ່າວແມ່ນປະເດັນສຳຄັນ.ພວກເຮົາຮັບຮູ້ມາເຖິງປະຈຸບັນມີຫຼາຍບັນດາໂຄງການທີ່ເຮັດໜ້າທີ່ກ່ຽວຂ້ອງກັບການສົ່ງເສີມແຕ່ກໍ່ມີກອບຂອງໃຜລາວ.ບ່ອນໃດທີ່ບໍ່ມີໂຄງການວຽກສົ່ງເສີມກໍເດີນບໍ່ຄ່ອງຕົວເຮັດໄດ້ນ້ອຍແລະພວກເຮົາ ກໍ່ມີປະສົບການໃນເລື່ອງນີ້ດີ. ມີບາງໂຄງການເກີດມີຜົນສຳເລັດດີບາງໂຄງການລົ້ມເຫຼວ ແລະ ກໍ່ມີຫຼາຍຮູບແບບການສົ່ງເສີມທີ່ຕ່າງກັນຕາມແຕ່ລະໂຄງການ.



ຍິ່ງໄປກ່ວານັ້ນຜົນເກີດຂຶ້ນໄດ້ກໍ່ແມ່ນນອນໃນຊ່ວງໂຄງການມີຊີວິດແຕ່ເມື່ອໂຄງການໝົດໄປກິດຈະກຳກໍ່ຫາຍໄປນຳ, ບາງເມືອງຍັງຄິດວ່າວຽກສົ່ງເສີມແມ່ນວຽກຂອງບາງໂຄງການຕ້ອງເຮັດ. ທັງໝົດຄວາມເຂົ້າໃຈອັນນີ້ຕ້ອງໄດ້ປ່ຽນແປງຢ່າງເຖິງກົກເຖິງຮາກ.

ພວກເຮົາມີຄວາມຈຳເປັນແລະຮອດເວລາທີ່ຕ້ອງມີລະບົບສົ່ງເສີມແບບລາວໂດຍອອກແບບຕິດແທດຕົວຈິງປະຕິບັດໄດ້ແລະບໍ່ຂຶ້ນກັບການມີໂຄງການຊ່ວຍເຫຼືອມາຈາກທີ່ອື່ນຈຶ່ງຈະຮັບປະກັນຄວາມຍືນນານໄດ້. ຄວາມຍືນນານໃນທີ່ນີ້ໝາຍວ່າພວກເຮົາສາມາດດຳເນີນການຈັດຕັ້ງປະຕິບັດເອົາເອງໄດ້ເຖິງໂຄງການຈະໝົດໄປ,ຫຼືແມ່ນແຕ່ໃນເວລາບໍ່ມີໂຄງການຊ່ວຍເຫຼືອ.ບໍ່ພຽງແຕ່ເທົ່ານັ້ນພວກເຮົາຍັງຕ້ອງການໃຫ້ລະບົບການສົ່ງເສີມ ກ ປ ແບບລາວ ອັນນີ້ໄດ້ມີການປະສານແຊກຊ້ອນເຂົ້າໄປສູ່ບັນດາອົງການຈັດຕັ້ງຜູ້ໃຫ້ທຶນຕ່າງໆທີ່ກຳລັງຫຼືຈະອອກແບບໂຄງການເຂົ້າມາຊ່ວຍເຫຼືອວຽກງານສົ່ງເສີມຊຸມຊົນຊົນນະບົດ.

ເວົ້າແບບກົງໆກໍ່ຄືຢາກໃຫ້ທຸກໆບ້ານໃນທົ່ວປະເທດໄດ້ຮັບການບໍລິການທາງວິຊາການຈະຈາກໂຄງການໃດໆກໍ່ໄດ້.

ຖ:

ໝາຍວ່າການໃຫ້ການຊ່ວຍເຫຼືອໃນວຽກສົ່ງເສີມຂອງຜູ້ໃຫ້ທຶນຫຼືໂຄງການຕ່າງໆ ຕ້ອງນຳໃຊ້ຮູບແບບ VES?

ຕ:

ກໍ່ຢາກໃຫ້ເປັນແນວນັ້ນ:

ເວລາໃດທີ່ມີການອອກແບບແລະນຳສະເໜີໂຄງການໃໝ່ພວກເຮົາກໍ່ຕ້ອງການຮູ້ວ່າກິດຈະກຳຂອງໂຄງການທີ່ວາງອອກມານັ້ນມີອັນໃດທີ່ເປັນການຊ່ວຍສ້າງຕາໜ່າງການສົ່ງເສີມຂັ້ນບ້ານຂຶ້ນຢູ່ ໃນພື້ນທີ່ເປົ້າໝາຍເຂົ້າໄປຈັດຕັ້ງປະຕິ

ບັດຂອງໂຄງການເລົ່ານັ້ນ ແລະ ຂ້າພະເຈົ້າຢາກເນັ້ນໜັກອີກຕື່ມໃນສິ່ງທີ່ກ່ຽວຂ້ອງກັບຄວາມຍືນນານວ່າໂຄງການຕ່າງໆເລົ່ານັ້ນໄດ້ມີຄວາມປະສົງຊ່ວຍເອື້ອອຳນວຍການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານໃນກົມໃກການຈັດຕັ້ງຫ້ອງການ ກ ປ ໃນເມືອງ ຫຼືເຂດເປົ້າໝາຍນັ້ນແນວໃດເພື່ອສືບຕໍ່ດຳເນີນກິດຈະກຳການສົ່ງເສີມເວລາທີ່ໂຄງການໝົດໄປ?. ນີ້ໝາຍຄວາມວ່າກົມໃກການຈັດວາງງົບປະມານຂອງໂຄງການເລົ່ານັ້ນຕ້ອງເນັ້ນເພື່ອໃຫ້ເກີດມີການເອື້ອອຳນວຍການຈັດຕັ້ງປະຕິບັດວຽກສົ່ງເສີມທີ່ແທດຕົວຈິງຂອງພະນັກງານລັດ.ພວກເຮົາຮູ້ວ່າເປັນເລື່ອງທີ່ບໍ່ງ່າຍປານໃດກ່ອນຈະປະຕິບັດໄດ້, ແຕ່ກໍ່ເປັນທາງເລືອກທີ່ດີກ່ວາ, ພວກເຮົາຕ້ອງເຮັດໃນທຸກສິ່ງທີ່ໝັ້ນໃຈໄດ້ວ່າພວກເຮົາໄດ້ຫຼຸດພົ້ນອອກຈາກວົງຈອນການເພິ່ງພາແຕ່ໂຄງການຊ່ວຍເຫຼືອເພື່ອເຮັດໃຫ້ຕາໜ່າງສົ່ງເສີມຂັ້ນບ້ານແລະການໃຫ້ບໍລິການທາງເຕັກນິກຂອງເມືອງກ້າວເດີນໄດ້ເປັນສ່ວນໃຫຍ່.ໃນກອບຄວາມຄິດພວກເຮົາ,ໂຄງການຊ່ວຍເຫຼືອທີ່ເຂົ້າມາແມ່ນເປັນຜູ້ຊ່ວຍຄົ້ນຄິດພັດທະນາແລະຝຶກສິ່ງໃໝ່, ວິທີການໃໝ່ ແລະການທົດສອບອັນໃໝ່ໃຫ້ ບົນພື້ນຖານຜົນສຳເລັດແລະປະສົບການຜ່ານມາແຕ່ຕ້ອງຮັບປະກັນຄວາມຍືນຍົງໃນເລື່ອງຂີດຄວາມສາມາດພະນັກງານຜູ້ຈະສືບຕໍ່ຈັດຕັ້ງປະຕິບັດແລະ ການເງິນ-ງົບປະມານ.ພວກເຮົາມີຄວາມປະສົງຢາກໃຫ້ທຸກຝ່າຍຮັບຮູ້ແຈ້ງກ່ຽວກັບເລື່ອງນີ້ແນໃສ່ໃຫ້ເກີດມີການຕໍ່ລອງກັບບັນດາຜູ້ໃຫ້ທຶນໃນອະນາຄົດໃຫ້ເກີດຜົນໄດ້. ແຕ່ເປັນການຮັບຮູ້ແລ້ວວ່າພວກເຮົາຍັງຢູ່ຫ່າງໃກເປົ້າໝາຍ,ແຕ່ກໍ່ພະຍາຍາມເລີ່ມກ້າວທຳອິດແລ້ວຮັກສາຈັງຫວະ ກ້າວເດີນຕໍ່ໄປເລື້ອຍໆ

## ສິ່ງທ້າທາຍໃນຕໍ່ໜ້າອັນໃກ້ໆ

ຖ:

ຟັງແລ້ວເປັນໜ້າຕື່ນເຕັ້ນດີ ແລະ ກໍ່ບໍ່ຕ້ອງສົງໃສເລີຍວ່າສິ່ງກ່າວມານັ້ນເປັນສິ່ງທ້າທາຍທາງຍຸດທະສາດພໍສົມຄວນທີ່ທາງກອງສົ່ງເສີມຕ້ອງໄດ້ຜ່ານຜ່າ.ຢ່າງໃດກໍດີ,ໃນເວລານີ້ທ່ານເຫັນວ່າອັນໃດເປັນສິ່ງທ້າທາຍທີ່ພວກທ່ານຕ້ອງຜ່ານຜ່າໃຫ້ໄດ້ເພື່ອເລີ່ມກ້າວທຳອິດໃນການນຳສະເໜີລະບົບ VES ທີ່ກ່າວ?

ຕ:

ປະຈຸບັນພວກເຮົາເຫັນວ່າມີ ສາມສິ່ງທ້າທາຍທີ່ຕ້ອງໄດ້ຜ່ານຜ່າໄປພ້ອມໆກັນ:

**ກ) ການສະໜັບສະໜູນທາງການເງິນເພື່ອດຳເນີນ** VESໃນເລື່ອງນີ້ພວກເຮົາເຊື່ອວ່າແຕ່ລະບ້ານມີແບບແຜນຂອງຕົນເອງໃນການສັນຫາແລ່ງທຶນເພື່ອຜັກດັນໃຫ້ VES ໄດ້ມີການເຄື່ອນໄຫວ. ແຕ່ກໍ່ມີກອບລວມຂອງມັນຢູ່. ພວກເຮົາຕ້ອງຊອກໃຫ້ເຫັນໄດ້ຫຼາຍໆທາງອອກເພື່ອສ້າງແຮງຈູງໃຈໃຫ້ແກ່ວິຊາການບ້ານທີ່ສ້າງໄດ້ແລ້ວນັ້ນໄດ້ມີການເຄື່ອນໄຫວຢ່າງປົກກະຕິ. ຕ້ອງກຳນົດໃຫ້ໄດ້ວິທີການທີ່ຈະເປັນຮູບປະທຳຂອງແຕ່ລະບ້ານແລະຕ້ອງເຮັດໃຫ້ບັນດາບ້ານເລົ່ານັ້ນໄດ້ແລກປ່ຽນກັນເພື່ອສ້າງກຳລັງທາງການ



ເງິນຂອງຕົນເພື່ອວຽກງານການສົ່ງເສີມຂອງບ້ານ. ພວກເຮົາຕ້ອງພະຍາຍາມຢ່າງສູງເພື່ອກຳນົດໃຫ້ໄດ້ວ່າອຳນາດການປົກຄອງ,ວິຊາການບ້ານມີຄວາມຕ້ອງການແລະຈະຝຶກອັນໃດໃຫ້ເຂົາເຈົ້າເພື່ອເພີ່ມຂີດຄວາມສາມາດໃນການສັນຫາແລະຄຸ້ມຄອງຊັບພະຍາກອນການເງິນໃນລະດັບຊຸມຊົນໃຫ້ມີປະສິດຕິພາບແທ້ໆ. ເພາະກອງທຶນພັດທະນາບ້ານຂອງແຕ່ລະບ້ານມີແນ່ນອນຢູ່ແລ້ວ,ອັນເປັນແລ່ງທຶນທີ່ສາມາດດູດຊັບເຂົ້າສູ່ວຽກງານດັ່ງກ່າວໄດ້ ແລະທັງໝົດນີ້ ພວກເຮົາຕ້ອງຄົ້ນຄິດກຳນົດອອກແລະພັດທະນາໃຫ້ໄດ້.

**ຂ) ກົນໄກການປະຕິບັດວຽກສົ່ງເສີມແຕ່ເມືອງລົງຫາບ້ານ VES**

ໃນເລື່ອງນີ້ເຂົ້າໃຈວ່າພວກເຮົາຕ້ອງເອົາໃຈໃສ່ໃນວິທີການປະຕິບັດວຽກສົ່ງເສີມແທ້ໆ,ໂດຍສະເພາະການກຳນົດວິທີການທີ່ແທດຕົວຈິງເພື່ອໃຫ້ພະນັກງານສົ່ງເສີມເມືອງໄດ້ເຮັດວຽກຢ່າງໃກ້ຊິດຕິດແທດຮາກຖານສຳລັບສ້າງຕານ່າງການສົ່ງເສີມຂັ້ນບ້ານ.ໝາຍວ່າພວກເຮົາຕ້ອງຄົ້ນໃຫ້ເຫັນວ່າບົດບາດໜ້າທີ່ຄວາມຮັບຜິດຊອບພື້ນຖານທີ່ຕ້ອງປະຕິບັດໃນເລື່ອງນີ້ຂອງເມືອງຄວນເປັນແນວໃດ?ແນ່ນອນມັນມີສ່ວນສຳພັນແລະຂຶ້ນກັບລັກສະນະສະເພາະຂອງແຕ່ລະເຂດການຜະລິດໃນແຕ່ລະເມືອງ.




ສິ່ງທ້າທາຍອັນສຳຄັນບໍ່ນ້ອຍກໍ່ແມ່ນເລື່ອງຈຸດ ບໍລິການດ້ານສົ່ງເສີມ, ເພາະບາງເຂດຂອງປະເທດ ການຈະໄປຫາບ້ານນຶ່ງຈາກອີກບ້ານນຶ່ງຫຼືຈາກ ຫ້ອງການ ກ ປ ເມືອງຕ້ອງໄຊ້ເວລາ ດົນພໍສົມຄວນ. ສະນັ້ນຕ້ອງຄິດຫາທາງອອກທີ່ ເປັນໄປໄດ້ເພື່ອແກ້ໄຂສິ່ງດັ່ງກ່າວໂດຍສະ ເພາະໃນເຂດພູດອຍ. ພາຍໃຕ້ການຄຸ້ມຄອງຂອງຫ້ອງການ ກ ປ ເມືອງນຶ່ງໆອາດຈຳຕ້ອງຈັດຕັ້ງເປັນຈຸດໃຫ້ບໍລິການປະຈຳເຂດເພື່ອໃຫ້ຊາວບ້ານ ໄດ້ຮັບການບໍລິການຈາກພະນັກງານສົ່ງເສີມໄວຂຶ້ນ ຖ້າຈັດຕັ້ງໄດ້ດີໃນຍາວນານຈຸດໃຫ້ບໍລິການປະຈຳເຂດນີ້ອາດດຶງເອົາບັນດາວິຊາການບ້ານໃນເລື່ອງຕ່າງໆຈາກກຸ່ມບ້ານຂອງເຂດນັ້ນເຂົ້າມາມີບົດບາດໃນການຄຸ້ມຄອງແລະກະຈາຍຄວາມຮູ້ເອົາເອງ.ສິ່ງນີ້ມັນເປັນການບຳລຸງສ້າງຄວາມເປັນເຈົ້າການຂອງພື້ນຖານການຜະລິດທີ່ດີໃນການຜັນຂະຫຍາຍແນວທາງຂອງພັກໂດຍປະຊາຊົນເອງ. ສິ່ງນີ້ໝາຍວ່າປະຊາຊົນຈະເປັນຜູ້ຮັບຜິດຊອບການບໍລິການທາງເຕັກນິກເອງໄດ້ຕາມທີ່ສະມະຊິກມີຄວາມຕ້ອງການ .ຢ່າງໃດກໍດີພວກເຮົາຕ້ອງຊອກວິທີຈັດຕັ້ງແລະຄຸ້ມຄອງທີ່ສອດຄ່ອງອີ່ຫຼືເນັ້ນການສ້າງຄວາມເຂັ້ມແຂງຂອງກຳລັງການຜະລິດໃນພື້ນຖານອີ່ຫຼື

**ຄ) ການຝຶກອົບຮົມເພື່ອສ້າງພະນັກງານວິຊາການ ໃຫ້ກາຍເປັນນັກສົ່ງເສີມຮອບດ້ານເພື່ອພາລະກິດການສ້າງ VES**

ມາເຖິງປະຈຸບັນສິ່ງດັ່ງກ່າວຍັງເປັນອັນທ່ວງດຶງແກ່ການພຸ່ງຂະຫຍາຍຂອງວຽກສົ່ງເສີມ,ຊຶ່ງຕ້ອງໄດ້ທັບມ້າງໃຫ້ໄດ້. ພວກເຮົາຕ້ອງການໂດຍສະເພາະພະນັກງານໃນລະດັບເມືອງໃຫ້ມີຂີດຄວາມສາມາດໃນເລື່ອງຮູບແບບວິທີການສົ່ງເສີມ,ຫາກບໍ່ພຽງແຕ່ມີວິຊາສະເພາະອ້ອຍຕ້ອຍບວກກັບການລົ້ງເຮັດວຽກຫຼາຍປີເທົ່ານັ້ນ ເພື່ອເປັນຜູ້ລິເລີ່ມຂະບວນການສ້າງລະບົບຕານ່າງການສົ່ງເສີມຂັ້ນບ້ານໃນທຸກໆເມືອງຮວມທັງການສືບຕໍ່ຊຸກຍູ້ໃຫ້ເກີດການພັດທະນາຕໍ່ໄປເລື້ອຍໆ. ເພາະການ ສ້າງຫຼືຝຶກຄົນໃນເມືອງນຶ່ງໆໃຫ້ໄດ້ຕ້ອງໄຊ້ເວລາພໍສົມຄວນ. ພວກເຮົາບໍ່ມີເວລາສຳລັບການລໍຄອຍອີກແລ້ວຕ້ອງໄດ້ເລີ່ມກ້າວໄປຂ້າງໜ້າ ແລະ ເວລານີ້ ໂຄງການ LEAP ແມ່ນ ໄດ້ເລີ່ມມາແລ້ວ.

ຖ:

ຊັ້ນ! ບັນດາໂຄງການອື່ນໆຈະຊ່ວຍປະກອບສ່ວນເຂົ້າໃນຄວາມພະຍາຍາມອັນໃຫຍ່ຫຼວງຂອງກະຊວງ ກ ປ ແນວໃດ?

ຕ:
ດັ່ງທີ່ຂ້າພະເຈົ້າໄດ້ກ່າວມາແລ້ວ! ພວກເຮົາຍາມໃດກໍ່ເນັ້ນໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກການຈັດຕັ້ງລັດທີ່ມີຢູ່ເປັນສຳຄັນແລະເທົ່າທີ່ເຮັດໄດ້.ພວກເຮົາຈະພະຍາຍາມສົມທົບນຳໃຊ້ບັນດາໂຄງການທີ່ມີຢູ່ຕາມໂຄງປະກອບວຽກສົ່ງເສີມຂອງແຕ່ລະໂຄງການນັ້ນໆ, ໝາຍວ່າຕ້ອງມີການຄັດຈ້ອນຕໍ່ລອງໃນແຜນກິດຈະກຳແລະງົບປະມານໃຫ້ເກີດມີການຝຶກບຳລຸງສ້າງນັກສົ່ງເສີມເມືອງ ແລະ ວິຊາການບ້ານບົນພື້ນຖານແລະ ຍຸດທະສາດຂອງໂຄງການນັ້ນໆ. ເວລາໃດຫາກມີການອອກແບບໂຄງການໃໝ່ຫຼືຕໍ່ໂຄງການກໍ່ຕ້ອງຕໍ່ລອງໃຫ້ໄດ້ເອົາໃຈໃສ່ການສ້າງໃຫ້ມີຕານາງການສົ່ງເສີມຂັ້ນບ້ານແລະ ນັກສົ່ງເສີມດ້ານນັ້ນໆໃນລະດັບເມືອງຕາມຮູບແບບ ແລະ ວິທີການສ້າງ VES . ໃຫ້ມີການຂະຫຍາຍຢ່າງຕໍ່ເນື່ອງໄປເລື້ອຍໆ

**ການເຮັດໃຫ້ທຸກຝ່າຍຮັບຮູ້ນຳ**

ຖ:
ພວກເຮົາຂໍສະແດງຄວາມຊົມເຊີຍແລະສະໜັບສະໜູນກະຊວງ ກ ປ ກໍ່ຄື ສປປລ ໃນການສືບຕໍ່ດຳເນີນການສົ່ງເສີມອັນສົມຄວນນີ້ຕາມຍຸດທະສາດດັ່ງກ່າວ. ແລະກໍ່ຈະເປັນສິ່ງທີ່ໜ້າສົນໃຈໃນການຮຽນຮູ້ຈາກພວກທ່ານໃນວິທີການຈັດຕັ້ງປະຕິບັດຕົວຈິງອີກດ້ວຍ. ຈະມີວິທີທາງອັນໃດບໍທີ່ສາມາດຮັບຊາບຂໍ້ມູນໃນການຈັດຕັ້ງປະຕິບັດຄວາມພະຍາຍາມດັ່ງກ່າວຂອງພວກທ່ານ?

ຕ.
ເປັນຈຸດສຳຄັນເລີຍ! ແມ່ນ! ພວກເຮົາຕ້ອງການພັດທະນາລະບົບ ແລະພາຫະນະໃນການສື່ສານສຳພັນທີ່ທຸກຄົນສາມາດເຂົ້າເຖິງຂໍ້ມູນໄດ້ບໍ່ວ່າຢູ່ພາຍໃນກໍ່ຄືຢູ່ບ່ອນອື່ນໆເພື່ອໃຫ້ເຫັນໄດ້ທັງຜົນສຳເລັດແລະສິ່ງຄົງຄ້າງຂອງພວກເຮົາ. ທີ່ສຳຄັນກໍ່ຄືຢາກໃຫ້ຮູ້ວ່າພວກເຮົາກຳລັງເລັ່ງລັດພັດທະນາລະບົບ ສົ່ງເສີມແບບສະບັບຕົນເອງ, ອັນເປັນສິ່ງສຳຄັນທີ່ທາງອົງການຈັດຕັ້ງສາກົນທີ່ຕ້ອງການຊ່ວຍເຫຼືອຂະແໜງການພວກເຮົາດ້ານນີ້ ໄດ້ມີການຮັບຮູ້ຂໍ້ມູນທີ່ດີເປັນປະໂຫຍດ. ຜ່ານມາໄດ້ມີການຈັດຕັ້ງກອງປະຊຸມວຽກງານສົ່ງເສີມທົ່ວປະເທດປະຈຳປີຂຶ້ນ, ຊຶ່ງເທື່ອທຳອິດທີ່ຈັດຂຶ້ນແມ່ນໃນວັນທີ 12/10 /2003



ໂດຍຜ່ານກອງປະຊຸມດັ່ງ ກ່າວໃນແຕ່ລະປີຈະເປັນການນຳເອົາຜົນສຳເລັດແລະຂໍ້ຄົງຄ້າງນຳມາແລກປ່ຽນສົນທະນາຫາທາງຂະຫຍາຍແລະແກ້ໄຂ.ແຕ່ກໍ່ອາດບໍ່ພໍພວກເຮົາຈະຕ້ອງພະຍາຍາມແລະມີຄວາມປະສົງຢາກສ້າງສື່ກາງໃດນຶ່ງທີ່ເປັນລະບົບໃຫ້ແກ່ການປະສານສຳພັນຊຶ່ງກັນແລະກັນໄດ້ທ່ວງທັນເຫດການ. ເຊື່ອວ່າ! ທ່ານຈະໄດ້ຮັບຊາບຈາກ ພວກເຮົາ ແນ່ນອນ.